**ຂັ້ນຕອນການຂໍອະນຸຍາດນໍາເຂົ້າຢາເສບຕິດ, ວັດຖຸອອກລິດຕໍ່ຈິດ-ປະສາດ ແລະ ຢາຄວບຄຸມ**

1. ຂໍອະນຸຍາດທາງການຢາເສບຕິດ, ວັດຖຸອອກລິດຕໍ່ຈິດ-ປະສາດ ແລະ ຢາຄວບຄຸມ.
    - ຈຸດປະສົງເພື່ອນໍາໃຊ້ໃນການແຈ້ງໃຫ້ປະເທດສົ່ງອອກຮັບຊາບກ່ອນການນໍາເຂົ້າຕົວຈິງ, ໃບອະນຸຍາດທາງການບໍ່ສາມາດໃຊ້ແທນໃບອະນຸຍາດນໍາເຂົ້າຜະລິດຕະພັນຢາຕົວຈິງໄດ້.
    - ບໍລິສັດນໍາເຂົ້າຕ້ອງສົ່ງໃບອະນຸຍາດທາງການສະບັບຕົ້ນ ໃຫ້ແກ່ບໍລິສັດ ຫຼື ໂຮງງານຜູ້ສົ່ງອອກ.
    - ໃນກໍລະນີທີ່ໃບອະນຸຍາດໝົດອາຍຸການນໍາໃຊ້ ຫຼື ມີການປ່ຽນແປງໃດໆ ບໍລິສັດນໍາເຂົ້າຕ້ອງນໍາໃບອະນຸຍາດທາງການສະບັບຕົ້ນ ກັບຄືນມາໃຫ້ ກົມອາຫານ ແລະ ຢາ ເພື່ອຕໍ່ອາຍຸ ຫຼື ແກ້ໄຂໃບອະນຸຍາດດັ່ງກ່າວ.
    - ບໍລິສັດນໍາເຂົ້າຕ້ອງຄັດຕິດ ການລາຍງານການຈໍາໜ່າຍຢາ (ຕາມແບບຟອມ) ຄັດຕິດມາພ້ອມ.
2. ຂໍອະນຸຍາດນໍາເຂົ້າຕົວຈິງ ຢາເສບຕິດ, ວັດຖຸອອກລິດຕໍ່ຈິດ-ປະສາດ ແລະ ຢາຄວບຄຸມ.
    - ຈຸດປະສົງແມ່ນເພື່ອນໍາໃຊ້ເຂົ້າໃນການນໍາເຂົ້າຜະລິດຕະພັນຢາຕົວຈິງ
    - ບໍລິສັດນໍາເຂົ້າ ຕ້ອງແຈ້ງໃບອະນຸຍາດນໍາເຂົ້າ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ ໃຫ້ແກ່ເຈົ້າໜ້າທີ່ ອຢ ປະຈໍາດ່ານຮັບຊາບທຸກຄັ້ງ.
    - ໃນກໍລະນີທີ່ໃບອະນຸຍາດມີການປ່ຽນແປງໃດໆ ບໍລິສັດນໍາເຂົ້າຕ້ອງນໍາໃບອະນຸຍາດນໍາເຂົ້າຕົວຈິງສະບັບຕົ້ນ ກັບຄືນມາໃຫ້ ກົມອາຫານ ແລະ ຢາ ເພື່ອແກ້ໄຂໃບອະນຸຍາດດັ່ງກ່າວ.